ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

628, ໜ່ວຍ 19, ບ້ານ ໂພນພະເນົາ, ກມ. 5, ຖະໜົນ ໄກສອນພົມວິຫານ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.
ໂທ-ແຟັກ: +856 21 418 062-6

ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021
ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (“ບໍລິສັດ”)

ວັນ, ເວລາ ແລະ ສະຖານທີ່ :

ກອງປະຊຸມໄດ້ຈັດຂຶ້ນໃນວັນທີ 28 ເມສາ 2022 ເວລາ 09:30 ໂມງ ທີ່ ຫ້ອງ Pearl Room ຊັ້ນ4, ຄອນເວັນຊັນ ເຊັນເຕີ້, ໂຮງແຮມ ແລນມາກ ແມ່ຂອງ ລີເວີໄຊ, ບ້ານ ທາດຂາວ ເມືອງ ສີສັດຕະນາກ ນະຄອນຫຼວງວຽງຈັນ

ກ່ອນທີ່ຈະເປີດກອງປະຊຸມ:

ທ່ານ ຊາຄຣິດ ນັກສອນ ປະທານສະພາບໍລິຫານຂອງບໍລິສັດ ໄດ້ແຈ້ງໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ ໂດຍຜ່ານວີດີໂອຄອນເຟີເລັນວ່າ, ເນື່ອງຈາກມີການແຜ່ລະບາດຂອງພະຍາດໄວຣັດ ໂຄວິດ-19, ລັດຖະບານລາວໄດ້ ອອກຄຳສັ່ງມາດຕະການເພື່ອປ້ອງກັນ, ສະກັດກັ້ນ ແລະ ຄວບຄຸມພະຍາດໄວຣັດ ໂຄວິດ-19 ເຊິ່ງມີມາດຕະການໜຶ່ງ ແມ່ນບໍ່ອະນຸຍາດໃຫ້ເດີນທາງເຂົ້າ-ອອກປະເທດໄດ້, ປະຈຸບັນສະມາຊິກສະພາບໍລິຫານຂອງບໍລິສັດຫຼາຍທ່ານທີ່ຢູ່ ຕ່າງປະເທດບໍ່ສາມາດເຂົ້າຮ່ວມກອງປະຊຸມດ້ວຍຕົນເອງໄດ້ ແຕ່ຈະເຂົ້າຮ່ວມກອງປະຊຸມໂດຍຜ່ານວີດີໂອຄອນເຟີເລັນ

ປະທານສະພາບໍລິຫານ ເປັນປະທານກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021, ປະທານກອງປະຊຸມໄດ້ກ່າວ ຕ້ອນຮັບບັນດາທ່ານຜູ້ຖືຮຸ້ນ ແລະ ຜູ້ເຂົ້າຮ່ວມທັງໝົດພ້ອມທັງແຈ້ງໃຫ້ຊາບວ່າ ມີຜູ້ເຂົ້າຮ່ວມປະຊຸມ ທັງໝົດ 22 ທ່ານ, 32.139.352 ຮຸ້ນ ຫຼື ເທົ່າກັບ 80,35% ຂອງຈຳນວນຮຸ້ນທັງໝົດ ຖືວ່າຄົບອົງປະຊຸມຕາມລະບຽບກົດໝາຍ ແລະ ລະບຽບຂອງບໍລິສັດ, ປະທານໄດ້ເປີດກອງປະຊຸມຢ່າງເປັນທາງການໃນເວລາ 09:48 ໂມງ ແລະ ມອບໝາຍ ໃຫ້ພິທີກອນແນະນຳສະມາຊິກສະພາບໍລິຫານລວມທັງເຈົ້າໜ້າທີ່ ທີ່ກ່ຽວຂ້ອງເຂົ້າຮ່ວມປະຊຸມດັ່ງຕໍ່ໄປນີ້:

ຜູ້ເຂົ້າຮ່ວມ:

- **ສະມາຊິກສະພາບໍລິຫານຜູ້ທີ່ເຂົ້າຮ່ວມກອງປະຊຸມ:**
  1. ທ່ານນາງ ອິນທະວິໄລ ອຸດົມ ຮອງປະທານສະພາບໍລິຫານ
  2. ທ່ານ ມານົບ ຕຣີລິດວິໄລ ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່

- **ສະມາຊິກສະພາບໍລິຫານຜູ້ທີ່ເຂົ້າຮ່ວມປະຊຸມຜ່ານ ວີດີໂອ ຄອນເຟີເລັນ:**

1. ທ່ານ ຊາຄຣິດ ນັກສອນ ປະທານສະພາບໍລິຫານ
2. ທ່ານນາງ ປຣາດຖະໜາ ນັກສອນ ສະມາຊິກສະພາບໍລິຫານ
3. ທ່ານນາງ ສຸທິດາ ນັກສອນ ສະມາຊິກສະພາບໍລິຫານ
4. ທ່ານ ກຣຽງໄກ ນິດສະຍັນ ສະມາຊິກສະພາບໍລິຫານ
5. ທ່ານ ນັນທະພັດ ງາມປລັ່ງ ສະມາຊິກສະພາບໍລິຫານອິດສະຫຼະ
6. ທ່ານ ທິຣະເມດ ອຸດທິພັດພິບູນ ສະມາຊິກສະພາບໍລິຫານອິດສະຫຼະ
7. ທ່ານ ວິນຍູ ຈີລະປະພາການ ສະມາຊິກສະພາບໍລິຫານອິດສະຫຼະ

- **ຜູ້ບໍລິຫານທີ່ເຂົ້າຮ່ວມກອງປະຊຸມ ຜ່ານ ວີດີໂອ ຄອນເຟີເລັນ:**

1. ທ່ານ ທອງຖະຫວັນ ທອງແຖມ ຮັກສາການຮອງຜູ້ອຳນວຍການດ້ານການເງິນ

- **ຜູ້ບໍລິຫານທີ່ເຂົ້າຮ່ວມກອງປະຊຸມ:**

1. ທ່ານນາງ ສຸລິພອນ ສຸວັນໄຊລົບ ຜູ້ຈັດການພະແນກບັນຊີ
2. ທ່ານ ພົງສີລິ ທອງແຖມ ນະ ອະຍຸດທະຍາ ເລຂານຸການບໍລິສັດ

- **ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ:**

1. ທ່ານນາງ ສຸລິພອນ ສຸວັນໄຊລົບ ໃນນາມຄະນະກຳມະການກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ
2. ທ່ານ ພົງສີລິ ທອງແຖມ ນະ ອະຍຸດທະຍາ ໃນນາມຄະນະກຳມະການກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ
3. ທ່ານນາງ ບຸນແຕ່ງ ສີວັນທອງ ຜູ້ຖືຮຸ້ນລາຍຍ່ອຍຂອງ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ໃນນາມຄະນະກຳມະການກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ
4. ທ່ານນາງ ອານຸວັນ ທຳມະວົງ ຜູ້ຕາງໜ້າຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມ
5. ທ່ານ ຈອນນີ້ ແພງວົງສາ ຜູ້ຕາງໜ້າຈາກຕະຫຼາດຫຼັກຊັບລາວ, ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມ
6. ທ່ານນາງ ສຸລິນທອນ ມຸກສະຫວັນ ຜູ້ຕາງໜ້າຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ໃນນາມຄະນະຕິດຕາມ ແລະປະເມີນການດຳເນີນກອງປະຊຸມ
7. ທ່ານນາງ ຕຸກຕິນ ສີວັນທອງ ຜູ້ຖືຮຸ້ນລາຍຍ່ອຍຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມ

ຫລັງຈາກນັ້ນ, ພິທີກອນໄດ້ລາຍງານແຕ່ລະວາລະຂອງກອງປະຊຸມສຳລັບມື້ນັ້ນແລະໄດ້ອະທິບາຍວິທີການລົງຄະແນນສຽງໃຫ້ຜູ້ເຂົ້າຮ່ວມກອງປະຊຸມດັ່ງຕໍ່ໄປນີ້:

1. ວາລະ:

1.1 ພິຈາລະນາຮັບຮອງ ລາຍງານການປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020

1.2 ພິຈາລະນາຮັບຮອງບົດສະຫຼຸບລາຍງານກ່ຽວກັບ ການດຳເນີນການຂອງບໍລິສັດ ແລະ ລາຍງານ ປະຈຳປີ 2021

1.3 ພິຈາລະນາຮັບຮອງງົບສະແດງສະຖານະທາງການເງິນຂອງບໍລິສັດ (ງົບດຸນ ບັນຊີລາຍຮັບ, ບັນຊີ ລາຍຈ່າຍ ແລະ ບັນຊີກຳໄລຂາດທຶນສຳເລັດ) ປະຈຳປີ 2021

1.4 ພິຈາລະນາຮັບຮອງການກູ້ຢືມເງິນຈາກສະຖາບັນການເງິນ ແລະ ແນວທາງຈັດຫາແຫຼ່ງເງິນກູ້ຢືມ ເພື່ອໃຊ້ສຳລັບຂະຫຍາຍກິດຈະການ ຕາມແຜນງານປະຈຳປີ 2022

1.5 ພິຈາລະນາອະນຸມັດການຈັດສັນ ກຳໄລສຸດທິປະຈຳປີ 2021 ແລະ ວິທີການແບ່ງເງິນປັນຜົນ

1.6 ພິຈາລະນາອະນຸມັດແຜນການດຳເນີນການ, ເງິນເດືອນຂອງພະນັກງານ ແລະ ງົບລົງທຶນຂອງ ບໍລິສັດ ປະຈຳປີ 2022

1.7 ພິຈາລະນາແຕ່ງສະມາຊິກສະພາບໍລິຫານຊຸດໃຫມ່ທົດແທນຊຸດປັດຈຸບັນທີ່ກຳລັງຈະຫມົດວາລະລົງ

1.8 ພິຈາລະນາອະນຸມັດ ຈ່າຍຄ່າຕອບແທນລາຍປີ 2021 ສຳລັບຜູ້ອຳນວຍການຂອງບໍລິສັດ

1.9 ພິຈາລະນາອະນຸມັດ ກຳນົດຜົນຕອບແທນປະຈຳປີ, ເບ້ຍປະຊຸມ ແລະ ເງິນເດືອນຂອງ ຜູ້ອຳນວຍການ ປະຈຳປີ 2022

1.10 ພິຈາລະນາອະນຸມັດແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຕອບແທນສຳລັບການ ກວດສອບບັນຊີ ປະຈຳປີ 2022

1.11 ເລື່ອງອື່ນໆ (ຖ້າມີ)

2. ວິທີລົງຄະແນນສຽງ

- ທ່ານຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທີ່ທ່ານຖືຢູ່ ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ
- ໃນການລົງຄະແນນສຽງໃນແຕ່ລະວາລະ ປະທານຈະສອບຖາມຜູ້ຖືຮຸ້ນວ່າ ມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ແມ່ນ ໃຫ້ລົງຄະແນນສຽງໃນບັດລົງຄະແນນສຽງໃນວາລະນັ້ນໆ ທີ່ເຈົ້າໜ້າທີ່ໄດ້ແຈກຢາຍໃຫ້ກ່ອນເຂົ້າຫ້ອງປະຊຸມ ພ້ອມທັງຍົກບັດດັ່ງກ່າວຂຶ້ນສູງໆ ຈົນກວ່າຈະມີເຈົ້າໜ້າທີ່ມາເກັບບັດລົງຄະແນນເພື່ອໄປກວດນັບຄະແນນສຽງ ແລະ ສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກບັດຖືວ່າຜູ້ຖືຮຸ້ນທ່ານນັ້ນ ມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ

- ສຳລັບຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ແລະ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຕາມທີ່ໄດ້ລະບຸໄວ້ໃນໃບມອບສິດ, ບໍລິສັດໄດ້ນຳເອົາການລົງຄະແນນສຽງຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສິດດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າໃນເວລາທີ່ຜູ້ຕາງໜ້າລົງທະບຽນເປັນທີ່ຮຽບຮ້ອຍແລ້ວ ເພື່ອເປັນຄວາມສະດວກໃຫ້ແກ່ຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງໃນບັດລົງຄະແນນໃນກອງປະຊຸມ

3. ການນັບຄະແນນສຽງ
   - ການນັບຄະແນນສຽງໃນແຕ່ລະວາລະ ຈະນັບຄະແນນສຽງທີ່ບໍ່ເຫັນດີຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນຕາມທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າໃນວາລະທີ່ຜູ້ຕາງໜ້າລົງທະບຽນເຂົ້າຮ່ວມກອງປະຊຸມ ໂດຍນຳມາຫັກອອກຈາກຈຳນວນຮຸ້ນທັງໝົດຂອງຜູ້ເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງໃນແຕ່ລະວາລະ
   - ປະທານຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະໃຫ້ກອງປະຊຸມໄດ້ຮັບຊາບ ຫຼັງຈາກລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງ. ໃນກໍລະນີຜູ້ຖືຮຸ້ນໄດ້ສົ່ງບັດລົງຄະແນນສຽງບໍ່ເຫັນດີ ພາຍຫຼັງຈາກທີ່ປະທານໄດ້ປະກາດໃຫ້ກອງປະຊຸມຮັບຊາບຜົນການລົງຄະແນນສຽງໃນວາລະສິ້ນສຸດລົງແລ້ວນັ້ນ, ບໍລິສັດຈະບໍ່ໄດ້ນຳເອົາຄະແນນສຽງດັ່ງກ່າວ ມານັບຄະແນນສຽງຕື່ມອີກ

ປະທານກອງປະຊຸມສືບຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ໂດຍລາຍງານແຕ່ລະວາລະດັ່ງຕໍ່ໄປນີ້:

ວາລະທີ 1 ຮັບຮອງ ລາຍງານການປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ເຂົ້າຮ່ວມກອງປະຊຸມຮັບຮອງລາຍງານກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີ 2020 ທີ່ປະຊຸມເມື່ອວັນທີ 27 ເມສາ 2021 ໂດຍວາລະນີ້ກອງປະຊຸມຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາລາຍງານການປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020 ເຊິ່ງໄດ້ປະຊຸມໃນວັນ 27 ເມສາ 2021

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງດັ່ງນີ້:

- ເຫັນດີ 32.139.352 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 32.139.352 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

ມະຕິ: ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາລາຍງານການປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020 ເຊິ່ງຈັດຂຶ້ນໃນວັນທີ 27 ເມສາ 2021 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

ວາລະທີ 2 ພິຈາລະນາຮັບຮອງບົດສະຫຼຸບລາຍງານກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາຍງານປະຈຳປີ 2021

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາຮັບຮອງບົດສະຫຼຸບລາຍງານກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາຍງານປະຈຳປີ 2021 ໂດຍວາລະນີ້ກອງປະຊຸມຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

ປະທານກອງປະຊຸມ ໄດ້ມອບໝາຍໃຫ້ ທ່ານ ມານົບ ຕຣີລິດວິໄລ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ ເປັນຜູ້ນຳສະເໜີບົດສະຫຼຸບລາຍງານກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາຍງານປະຈຳປີ 2021 ເຊິ່ງມີລາຍລະອຽດດັ່ງນີ້:

- ຜົນດຳເນີນງານທີ່ສຳຄັນຂອງປີ 2021
  - ເພີ່ມພື້ນທີໃຫ້ບໍລິການໃໝ່ ທີແຂວງຄຳມ່ວນ

    ບໍລິສັດໄດ້ເປີດ ໜ່ວຍບໍລິການໃໝ່ ໂດຍໄດ້ຮັບອະນຸມັດຈາກ ສະພາບໍລິຫານ ເມື່ອວັນທີ 13 ສິງຫາ 2021 ເພື່ອຮອງຮັບການຂະຍາຍທຸລະກິດໃຫ້ຄອບຄຸມຫຼາຍຂຶ້ນ
  - ກຳໜົດມາດຕະການຊ່ວຍເຫຼືອລູກຄ້າທີ່ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງໂຄໂລນ່າໄວຣັດ (Covid-19) ເຊິ່ງແບ່ງອອກເປັນມາດຕະການຄື:
    - ພັກຊຳລະໜີ້ເປັນເວລາ 2 ເດືອນ
    - ແປງສັນຍາໃຫມ່

- ເປີດໂຕ Mobile Application “M Huk” – M Huk ເປັນ Application ທີ່ເປັນຊ່ອງທາງການສື່ອສານໃໝ່ສຳລັບລູກຄ້າ ເພື່ອເປັນການຂະຫຍາຍທຸລະກິດຜ່ານຊ່ອງທາງ Digital Marketing ເມື່ອວັນທີ 25 ຕຸລາ 2021

- ຈຳນວນເງິນກູ້ໃໝ່ຂອງ ປີ 2021 ທຽບໃສ່ ປີ 2020

	2020	2021	ຜົນຕ່າງ
ຈຳນວນສັນຍາ (ຄັນ)	5.046	5.441	+7,8 %
ຈຳນວນເງິນໃຫ້ສິນເຊື່ອ (ລ້ານກີບ)	58.485	70.332	+20,3 %

- ຜົນການດຳເນີນທຸລະກິດປະຈຳ ປີ 2021 ທຽບໃສ່ ປີ 2020.

	2020	2021	ຜົນຕ່າງ
ກຳໄລສຸດທິ (ກ່ອນອາກອນ)	8.869,1	8.891,0	+ 21,9
ອາກອນນິຕິບຸກຄົນ	1.124,3	1.299,4	+ 175,1
ກຳໄລສຸດທິ (ຫຼັງອາກອນ)	7.744,8	7.591,6	- 153,2

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາບົດສະຫຼຸບລາຍງານກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາຍງານປະຈຳປີ 2021

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງ ດັ່ງນີ້:

- ເຫັນດີ 32.139.352 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 32.139.352 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

<u>ມະຕິ:</u> ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາບົດສະຫຼຸບລາຍງານກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາຍງານປະຈຳປີ 2021 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

ວາລະທີ 3 ພິຈາລະນາຮັບຮອງງົບສະແດງສະຖານະທາງການເງິນຂອງບໍລິສັດ (ງົບດຸນ ບັນຊີລາຍຮັບ, ບັນຊີລາຍຈ່າຍ ແລະ ບັນຊີກຳໄລຂາດທຶນສຳເລັດ) ປະຈຳປີ 2021

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາກ່ຽວກັບງົບສະແດງສະຖານະການເງິນຂອງ ບໍລິສັດ (ງົບດຸນ ບັນຊີລາຍຮັບ, ບັນຊີລາຍຈ່າຍ ແລະ ບັນຊີກຳໄລຂາດທຶນສຳເລັດ) ປະຈຳປີ 2021 ໂດຍ ວາລະນີ້ກອງປະຊຸມຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

ເຊິ່ງປະທານກອງປະຊຸມ ໄດ້ມອບໝາຍໃຫ້ ທ່ານ ມານົບ ຕຣີລິດວິໄລ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ ເປັນຜູ້ນຳສະເໜີກ່ຽວກັບງົບສະແດງສະຖານະການເງິນຂອງບໍລິສັດ (ງົບດຸນ ບັນຊີລາຍຮັບ, ບັນຊີລາຍຈ່າຍ ແລະ ບັນຊີກຳໄລຂາດທຶນສຳເລັດ) ປະຈຳປີ 2021 ເຊິ່ງມີລາຍລະອຽດ ດັ່ງນີ້:

- ສະຖານະທາງການເງິນ ວັນທີ 31 ທັນວາ 2021
  - ຊັບສິນລວມ 96.930,0 ລ້ານກີບ
  - ໜີ້ສິນລວມ 24.778,3 ລ້ານກີບ
  - ສ່ວນຂອງຜູ້ຖືຮຸ້ນ 72.151.7 ລ້ານກີບ
  - ລາຍໄດ້ລວມ 27.451.2 ລ້ານກີບ
  - ລາຍຈ່າຍລວມ 18.560.1 ລ້ານກີບ
  - ກຳໄລສຸດທິ 7.591.6 ລ້ານກີບ

Financial Ratio ທີ່ສຳຄັນ	2020	2021	ປ່ຽນ (+/-)
Net Profit Margin	30,0%	28,0%	- 2
ROA	8,7%	7,8%	- 0,9
ROE	10,9%	10,5%	- 0,4
D/E ratio (Times)	0,3	0,3%	0

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາງົບສະແດງສະຖານະການເງິນຂອງບໍລິສັດ (ງົບດຸນ ບັນຊີລາຍຮັບ, ບັນຊີລາຍຈ່າຍ ແລະ ບັນຊີກຳໄລຂາດທຶນ ສຳເລັດ) ປະຈຳປີ 2021

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງ ດັ່ງນີ້:

- ເຫັນດີ 32.139.352 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 32.139.352 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

<u>ມະຕິ:</u> ກອງປະຊຸມພິຈາລະນາງົບສະແດງສະຖານະການເງິນຂອງບໍລິສັດ (ງົບດຸນ ບັນຊີລາຍຮັບ, ບັນຊີລາຍຈ່າຍ ແລະ ບັນຊີກຳໄລຂາດທຶນສຳເລັດ) ປະຈຳປີ 2021 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

ວາລະທີ 4 ພິຈາລະນາຮັບຮອງການເງິນກູ້ຢືມຈາກສະຖາບັນການເງິນ ແລະ ແນວທາງຈັດຫາແຫຼ່ງເງິນກູ້ຢືມເພື່ອໃຊ້ສຳລັບຂະຫຍາຍກິດຈະການ ຕາມແຜນງານປະຈຳປີ 2022

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາຮັບຮອງການເງິນກູ້ຢືມຈາກສະຖາບັນການເງິນ ແລະ ແນວທາງຈັດຫາແຫຼ່ງເງິນກູ້ຢືມ ເພື່ອໃຊ້ສຳລັບຂະຫຍາຍກິດຈະການ ຕາມແຜນງານປະຈຳປີ 2022 ໂດຍວາລະນີ້ກອງປະຊຸມຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

ເຊິ່ງປະທານກອງປະຊຸມ ໄດ້ມອບໝາຍໃຫ້ ທ່ານ ມານົບ ຕຣີລິດວິໄລ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ ເປັນຜູ້ນຳສະເໜີກ່ຽວກັບ ການເງິນກູ້ຢືມຈາກສະຖາບັນການເງິນ ແລະ ແນວທາງຈັດຫາແຫຼ່ງເງິນກູ້ຢືມ ເພື່ອໃຊ້ສຳລັບຂະຫຍາຍກິດຈະການ ຕາມແຜນງານປະຈຳປີ 2022 ເຊິ່ງມີບົດສະຫຼຸບດັ່ງນີ້:

- ເງິນກູ້ຢືມ ເພື່ອໃຊ້ສຳລັບການຂະຫຍາຍກິດຈະການ ຕາມແຜນງານປະຈຳປີ 2022
  - ກູ້ເງິນເພີ່ມ 14,000 ລ້ານກີບ.
  - ລວມເງິນກູ້ບໍ່ເກີນ 32,000 ລ້ານກີບ.

  (ມອບອຳນາດໃຫ້ສະພາບໍລິຫານສາມາດປັບປ່ຽນວົງເງິນກູ້ຢືມ ປະຈຳປີ 2022 ໄດ້ຕາມສະຖານະການ ແລະ ຄວາມເໝາະສົມໂດຍຖືປະໂຫຍດຂອງບໍລິສັດເປັນສຳຄັນ)

- ແນວທາງໃນການກູ້ຢືມ.

  • ເງິນກູ້ຢືມຈາກ ທະນາຄານ EXIM Bank ຈາກປະເທດໄທ ວົງເງິນ 1,6 ລ້ານໂດລາ ສະຫະລັດ ຫຼື ຂະຫຍາຍວົງເງິນເພີ່ມເຕີມ

  • ກູ້ຢືມຈາກສະຖາບັນການເງິນ ທັງທີ່ມີຫຼັກຊັບຄ້ຳປະກັນ ຫຼື ບໍ່ມີຫຼັກຊັບຄ້ຳປະກັນ

  • ກູ້ຢືມໂດຍການອອກ Corporate Bond ທັງແບບມີຜູ້ຄ້ຳປະກັນ ແລະ ບໍ່ມີຜູ້ຄ້ຳປະກັນ

  • ກູ້ຢືມເງິນຈາກບຸກຄົນ, ນຳມະການ ຫຼື ຜູ້ຖືຮຸ້ນ ທັງທີ່ມີຫຼັກປະກັນ ແລະ ບໍ່ມີຫຼັກປະກັນ

  ໝາຍເຫດ : ຕ້ອງຂໍອະນຸຍາດຈາກຫນ່ວຍງານທີ່ກຳກັບດູແລ ແລະ ກົດໝາຍທີ່ກ່ຽວຂ້ອງກ່ອນ

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການກູ້ຢືມ ຈາກສະຖາບັນການເງິນ ແລະ ແນວທາງຈັດຫາແຫຼ່ງເງິນກູ້ຢືມ ເພື່ອໃຊ້ສຳລັບຂະຫຍາຍກິດຈະການຕາມ ແຜນງານປະຈຳປີ 2022

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງ ດັ່ງນີ້:

- ເຫັນດີ 32.139.352 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 32.139.352 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

<u>ມະຕິ:</u> ກອງປະຊຸມມີມະຕິການເງິນກູ້ຢືມຈາກສະຖາບັນການເງິນ ແລະ ແນວທາງຈັດຫາແຫຼ່ງເງິນກູ້ຢືມ ເພື່ອໃຊ້ສຳລັບຂະຫຍາຍກິດຈະການ ຕາມແຜນງານປະຈຳປີ 2022 ຫຼື ຕາມຄວາມເໝາະສົມທີ່ສະພາບໍລິຫານເຫັນສົມຄວນ ແລະ ມອບອຳນາດໃຫ້ສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ເປັນຜູ້ດຳເນີນການ ມີສິດພິຈາລະນາ ເງື່ອນໄຂຕ່າງໆ ໃນການກູ້ຢືມເງິນ ເຊັ່ນ ຫຼັກປະກັນ, ອັດຕາດອກເບ້ຍ, ໄລຍະເວລາຂອງສັນຍາ ແລະອື່ນໆ ແລະ ລົງນາມໃນເອກະສານຕ່າງໆ ທີ່ກ່ຽວຂ້ອງ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

ວາລະທີ 5 ພິຈາລະນາອະນຸມັດການຈັດສັນຫາກຳໄລສຸດທິ ປະຈຳປີ 2021 ແລະ ວິທີການແບ່ງເງິນປັນຜົນ

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາອະນຸມັດການຈັດສັນຫາກຳໄລສຸດທິ ປະຈຳປີ 2021 ແລະ ວິທີການແບ່ງເງິນປັນຜົນ ໃນວາລະກອງປະຊຸມຄັ້ງນີ້, ກອງປະຊຸມຈະລົງຄະແນນສຽງຮັບຮອງເອົາຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງໃນກອງປະຊຸມ.

ປະທານກອງປະຊຸມ ໄດ້ມອບໝາຍໃຫ້ ທ່ານ ມານົບ ຕຣີລິດວິໄລ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ ເປັນຜູ້ນຳສະເໜີກ່ຽວກັບ ການຈັດສັນຫາກຳໄລສຸດທິ ປະຈຳປີ 2021 ແລະ ວິທີການແບ່ງເງິນປັນຜົນເຊິ່ງມີບົດສະຫຼຸບດັ່ງນີ້:

- ສະຫຼຸບການຈັດສັນຫາກຳໄລສຸດທິປະຈຳປີ 2021 7.591.597.869 ກີບ
  1. ສຳຮອງຕາມກົດໝາຍ 759.159.787 ກີບ 10,00 %
  2. ຈ່າຍເງິນປັນຜົນ 2.280.000.000 ກີບ 30,03 %
  3. ສະສົມໄວ້ໃນກຳໄລສະສົມ 4.552.438.082 ກີບ 59,97 %
- ມື້ປິດປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນ ຂອງບໍລິສັດ ເພື່ອກຳນົດຜູ້ມີສິດໄດ້ຮັບເງິນປັນຜົນປະຈຳປີ ໃນວັນທີ 01 ເມສາ 2022
- ກຳນົດຈ່າຍເງິນປັນຜົນໃນອັດຕາ 57 ກີບຕໍ່ຮຸ້ນ (ມູນຄ່າກຳນົດ 1.000 ກີບຕໍ່ຮຸ້ນ) ພາຍໃນ 30 ວັນ ຫຼັງອະນຸມັດຈາກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021 ໂດຍໃຫ້ຜູ້ອຳນວຍການໃຫ່ຍ ເປັນຜູ້ກຳຜູ້ກຳນົດວັນຈ່າຍເງິນປັນຜົນ ທັ້ງນີ້ບໍລິສັດຢູ່ໃນລະຫວ່າງດຳເນີນການປ່ຽນແປງມູນຄ່າ ກຳນົດຈາກ 1.000 ກີບ ເປັນ 100 ກີບຕໍ່ຮຸ້ນ ເຊິ່ງຖ້າດຳເນີນການປ່ຽນແປງມູນຄ່າກຳນົດເປັນ 100 ກີບຕໍ່ຮຸ້ນ ກ່ອນວັນຈ່າຍເງິນປັນຜົນນັ້ນ ເງິນປັນຜົນຈະເທົ່າກັບ 5,7 ກີບຕໍ່ຮຸ້ນແທນ
- ເຫດຜົນທີ່ຈ່າຍເງິນປັນຜົນໃນອັດຕາຕ່ຳກວ່າ 50 ສ່ວນຮ້ອຍຂອງກຳໄລສຸດທິປະຈຳປີ
  - ບໍລິສັດຕ້ອງນຳເງິນໄປລົງທຶນ ເພື່ອຂະຫຍາຍປະລິມານສິນເຊື່ອ
  - ກຽມເງິນບາງສ່ວນໄວ້ໃຊ້ຄືນເງິນກູ້ຢືມທີ່ຮອດກຳນົດຊຳລະ

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ອະນຸມັດການຈັດສັນຫາກຳໄລສຸດທິ ປະຈຳປີ 2021 ແລະ ວິທີການແບ່ງເງິນປັນຜົນ

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງ ດັ່ງນີ້:

- ເຫັນດີ 32.139.352 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 32.139.352 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

<u>ມະຕິ:</u> ກອງປະຊຸມມີມະຕິອະນຸມັດການຈັດສັນຫາກຳໄລສຸດທິ ປະຈຳປີ 2021 ແລະວິທີການແບ່ງເງິນປັນຜົນ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ ດັ່ງນີ້:

1.	ສຳຮອງຕາມກົດໝາຍ	759.159.787	ກີບ 10,00 %
2.	ຈ່າຍເງິນປັນຜົນ	2.280.000.000	ກີບ 30,03 %
3.	ສະສົມໄວ້ໃນກຳໄລສະສົມ	4.552.438.082	ກີບ 59,97 %
	ລວມ	7.591.597.869	ກີບ

- ມື້ປິດປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນ ຂອງບໍລິສັດ ເພື່ອກຳນົດຜູ້ມີສິດໄດ້ຮັບເງິນປັນຜົນປະຈຳປີ ໃນວັນທີ 01 ເມສາ 2022
- ກຳນົດຈ່າຍເງິນປັນຜົນໃນອັດຕາ 57 ກີບຕໍ່ຮຸ້ນ (ມູນຄ່າກຳນົດ 1.000 ກີບຕໍ່ຮຸ້ນ) ພາຍໃນ 30 ວັນ ຫຼັງອະນຸມັດຈາກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021 ໂດຍໃຫ້ຜູ້ອຳນວຍການໃຫ່ຍເປັນຜູ້ກຳນົດວັນຈ່າຍເງິນປັນຜົນ ທັ້ງນີ້ບໍລິສັດຢູ່ໃນລະຫວ່າງດຳເນີນການປ່ຽນແປງມູນຄ່າກຳນົດຈາກ 1.000 ກີບ ເປັນ 100 ກີບຕໍ່ຮຸ້ນ ເຊິ່ງຖ້າດຳເນີນການປ່ຽນແປງມູນຄ່າກຳນົດເປັນ 100 ກີບຕໍ່ຮຸ້ນ ກ່ອນວັນຈ່າຍເງິນປັນຜົນນັ້ນ ເງິນປັນຜົນຈະເທົ່າກັບ 5,7 ກີບຕໍ່ຮຸ້ນແທນ

ວາລະທີ 6 ພິຈາລະນາອະນຸມັດແຜນດຳເນີນການ, ເງິນເດືອນຂອງພະນັກງານ ແລະ ງົບລົງທຶນຂອງບໍລິສັດ ປະຈຳປີ 2022

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາອະນຸມັດແຜນດຳເນີນການ, ເງິນເດືອນຂອງພະນັກງານ ແລະ ງົບລົງທຶນຂອງບໍລິສັດປະຈຳປີ 2022 ໃນວາລະກອງປະຊຸມຄັ້ງນີ້, ກອງປະຊຸມຈະລົງຄະແນນສຽງຮັບຮອງເອົາຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງໃນກອງປະຊຸມ.

ປະທານກອງປະຊຸມ ໄດ້ມອບໝາຍໃຫ້ ທ່ານ ມານິບ ຕຣີລິດວິໄລ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ ເປັນຜູ້ນຳສະເໜີກ່ຽວ ແຜນດຳເນີນການ, ເງິນເດືອນຂອງພະນັກງານ ແລະ ງົບລົງທຶນຂອງບໍລິສັດປະຈຳປີ 2022 ເຊິ່ງມີບົດສະຫຼຸບດັ່ງນີ້:

- ອີງຕາມແຜນທຸລະກິດຂອງບໍລິສັດ ສຳລັບປີ 2022, ບໍລິສັດໄດ້ຄາດຄະເນວ່າຈະມີກຳໄລສຸດທິ ຈຳນວນ 10,019.8 ລ້ານກີບ ໂດຍເພີ່ມຂຶ້ນ 31,9 ສ່ວນຮ້ອຍ ເມື່ອທຽບໃສ່ ກຳໄລສຸດທິ (ຫຼັງອາກອນ) ປະຈຳປີທີ່ຜ່ານມາ.
- ດ້ານການຕະຫຼາດ

  ບໍລິສັດມີແຜນຈະເພີ່ມຈຳນວນສັນຍາໃຫມ່ (ສັນຍາ) ຈຳນວນ 6,600 ສັນຍາ ເຊິ່ງມີກົນລະຍຸດດັ່ງນີ້:

  - ຮັກສາສ່ວນແບ່ງຕະຫຼາດໃນນະຄອນຫຼວງວຽງຈັນ ແລະ ແຂວງ ສະຫວັນນະເຂດ
  - ເພີ່ມລູກຄ້າໃນພື້ນທີ່ບໍລິການໃໝ່ ແຂວງຄຳມ່ວນ
  - ຢັງບໍ່ມີແຜນການເປີດສາຂາ ຫຼື ຫນ່ວຍບໍລິການໃໝ່
  - ພັດທະນາຊ່ອງທາງການຕະຫຼາດໃຫມ່ຜ່ານຊ່ອງທາງສື່ສານອອນໄລນ໌ (Social Media) ແລະ ເທັກໂນໂລຍີໃຫມ່
- ເງິນກູ້ຢືມ

  ຈາກແຜນດຳເນີນທຸລະກິດປີ 2022 ບໍລິສັດຕ້ອງການຂະຫຍາຍທຸລະກິດເພີ່ມຂຶ້ນອີກໃນຕະຫຼາດໃຫມ່ໆ ຕາມທີ່ກຳນົດໄວ້ໃນຍຸດທະສາດທີ່ກຳນົດໄວ້ ສະນັ້ນ, ບໍລິສັດຈຶ່ງຕ້ອງການກູ້ຢືມເງິນປະມານ 14.000 ລ້ານກີບ ແລະ ມີເງິນກູ້ຢືມລວມບໍ່ກາຍ 32,000 ລ້ານກີບ ເພື່ອເຮັດໃຫ້ບັນລຸຕາມແຜນທີ່ວາງໄວ້.

- ດ້ານດ້ານລົງທຶນ

ຫົວຂໍ້ການລົງທຶນ	ກີບ
ອາຄານ, ສຳນັກງານ ແລະ ຄ່າຕົບແຕ່ງ	70.000.000
ຍານພາຫະນະ	260.000.000
ຮາດແວຄອມພິວເຕີ ແລະ ອຸປະກອນອື່ນໆ	105.000.000
Application Software	280.000.000
ເຄື່ອງຄອມພິວເຕີ, ອຸປະກອງພ້ວງ	56.250.000
ອຸປະກອນຫ້ອງການ + ການຫົດແທນ	140.000.000
ການລົງທຶນສຳລັບສາຂາໃຫມ່ (ສິ່ງອຳນວຍຄວາມສະດວກ+ອຸປະກອນ)	35.000.000
ທັງໝົດ	**946.250.000**

- ດ້ານພະນັກງານ

  ຈຳນວນພະນັກງານທັງໝົດໃນທ້າຍປີ 2022 ແມ່ນ 122 ຄົນ, ເຊິ່ງງົບປະມານເງິນເດືອນ ຂອງພະນັກງານ ແລະ ຄ່າຕອບແທນຂອງສະມາຊິກສະພາບໍລິຫານທຸກທ່ານ ສຳລັບແຜນທຸລະ ກິດຂອງບໍລິສັດສຳລັບປີ 2022 ແມ່ນເທົ່າກັບ 10.627,5 ລ້ານກີບ ສຳລັບພະນັກງານລວມທັງ ຜູ້ອຳນວຍການໃຫຍ່

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາອະນຸມັດແຜນດຳເນີນການ, ເງິນເດືອນຂອງພະນັກງານ ແລະ ງົບລົງທຶນຂອງບໍລິສັດປະຈຳປີ 2022

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງ ດັ່ງນີ້:

- ເຫັນດີ 32.139.352 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 32.139.352 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

<u>ມະຕິ:</u> ກອງປະຊຸມມີມະຕິອະນຸມັດອະນຸມັດແຜນດຳເນີນການ, ເງິນເດືອນຂອງພະນັກງານ ແລະ ງົບລົງທຶນ ຂອງບໍລິສັດປະຈຳປີ 2022 ແລະມອບອຳນາດໃຫ້ສະພາບໍລິຫານ ປັບປຸງແຜນງານປະຈຳປີ 2022 ຕາມ ຄວາມເໝາະສົມ ແລະ ສະຖານະການແທ້ ໂດຍຖືປະໂຫຍດບໍລິສັດເປັນສຳຄັນ ດ້ວຍຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

ວາລະທີ 7 ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານຊຸດໃຫມ່ ທົດແທນຊຸດປະຈຸບັນທີ່ກຳລັງໝົດວາລະລົງ

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານຊຸດໃຫມ່ ທົດ ແທນຊຸດປະຈຸບັນທີ່ກຳລັງໝົດວາລະລົງ ໃນວາລະກອງປະຊຸມຄັ້ງນີ້, ກອງປະຊຸມຈະລົງຄະແນນສຽງຮັບຮອງ ເອົາຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງໃນກອງປະຊຸມ.

ຄະນະກຳມະການຄັດເລືອກ ໄດ້ຄັດເລືອກຜູ້ທີ່ມີຄຸນສົມບັດເໝາະສົມຈຳນວນທັງໝົດ 14 ທ່ານ ເພື່ອໃຫ້ຜູ້ຖືຮຸ້ນພິຈາລະນາຄັດເລືອກ ແລະ ເຫັນດີແຕ່ງຕັ້ງຈຳນວນ 9 ທ່ານ ໂດຍເລືອກຈາກບຸກຄົນທີ່ໄດ້ ຄະແນນສຽງອະນຸມັດລຽງຕາມຄະແນນສູງສຸດຫາຕ່ຳສຸດ ເຊິ່ງແບ່ງເປັນ 3 ກຸ່ມດັ່ງນີ້:

1. ຜູ້ທີ່ມີຄຸນສົມບັດເໝາະສົມ ເພື່ອຄັດເລືອກເປັນສະມາຊິກອິດສະຫຼະ ເລືອກ 3 ທ່ານຈາກຈຳນວນ 4 ທ່ານດັ່ງນີ້:

    a. ທ່ານ ວັນຄຳ ວໍລະວົງ
    b. ທ່ານ ວິນຍູ ຈີລະປະພາການ
    c. ທ່ານ ທິຣະເມດ ວຸດທິພັດພິບູນ
    d. ທ່ານ ນັນທະພັດ ງາມປລັ່ງ

2. ຜູ້ທີ່ມີຄຸນສົມບັດເໝາະສົມເພື່ອຄັດເລືອກເປັນສະມາຊິກທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ (Non-Executive Director) ເລືອກ 5 ທ່ານຈາກຈຳນວນ 9 ທ່ານດັ່ງນີ້:

    a. ທ່ານ ຊາຄຣິດ ນັກສອນ
    b. ທ່ານນາງ ອິນທະວິໄລ ອຸດົມ
    c. ທ່ານນາງ ປຣາດຖະໜາ ນັກສອນ
    d. ທ່ານນາງ ສຸທິດາ ນັກສອນ
    e. ທ່ານ ກຣາໄກ ນິດສະຍັນ
    f. ທ່ານ ທິຣະ ຊຸຕິວະລາພອນ
    g. ທ່ານ ວິຊຸນ ລັກຄະນາທິນ
    h. ທ່ານ ໄວຮຸ່ງ ມີນາກຸນ
    i. ທ່ານ ໂກວິດ ເກີດສີລິລັກ

3. ຜູ້ທີ່ມີຄຸນສົມບັດເໝາະສົມ ເພື່ອຄັດເລືອກເປັນສະມາຊິກສະພາບໍລິຫານທີ່ມີສ່ວນຮ່ວມໃນການບໍລິຫານ (Executive Director) ພິຈາລະນາຄັດເລືອກ 1 ທ່ານ ດັ່ງນີ້:

    a. ທ່ານ ມານິບ ຕຣີລິດວິໄລ

ຄະນະກຳມະການຂອງສະພາບໍລິຫານແບ່ງເປັນ 5 ຄະນະ ດັ່ງນີ້

- ຄະນະກຳມະການກວດສອບ
- ຄະນະກຳມະການຄຸ້ມຄອງຄວາມສ່ຽງ
- ຄະນະກຳມະການຄັດເລືອກ
- ຄະນະກຳມະການກຳນົດຜົນຕອບແທນ
- ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ

ປະທານສະເໜີໃຫ້ກອງປະຊຸມ ພິຈາລະນາເຫັນດີ ດັ່ງນີ້

1. ແຕ່ງຕັ້ງສະມາຊິກສະພາບໍລິຫານທົດແທນສະມາຊິກທີ່ໝົດວາລະລົງ ໂດຍພິຈາລະນາເປັນລາຍບຸກຄົນ
2. ການກຳນົດໜ້າທີ່ ແລະ ອຳນາດອະນຸມັດຕະຫຼອດຈົນການລົງນາມອະນຸມັດຂອງສະມາຊິກສະພາບໍລິຫານ (Authority) ມອບໝາຍໃຫ້ສະມາຊິກສະພາບໍລິຫານທີ່ໄດ້ຮັບຄັດເລືອກເຫັນດີນັ້ນ ຮ່ວມກັນກຳນົດ ແລະ ມອບໝາຍເພື່ອໃຫ້ສາມາດເຮັດໜ້າທີ່ໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ ເປັນປະໂຫຍດຕໍ່ບໍລິສັດເປັນທີ່ສຳຄັນ
3. ສະມາຊິກສະພາບໍລິຫານຊຸດໃຫມ່ມີອາຍຸວາລະ 2 ປີ ໃຫ້ມີຜົນສັກສິດນັບຕັ້ງແຕ່ວັນທີ່ມີການແຕ່ງຕັ້ງ
4. ມອບສິດໃຫ້ສະພາບໍລິຫານໃນການປັບປ່ຽນໜ້າທີ່ຈາກສະມາຊິກທີ່ມີສ່ວນຮ່ວມໃນການບໍລິຫານ ແລະ ສະມາຊິກທີ່ບໍ່ມີສ່ວນຮ່ວມໃນການບໍລິຫານໄດ້ໂດຍເປັນປະໂຫຍດຕໍ່ບໍລິສັດເປັນສຳຄັນ

ທ່ານປະທານໄດ້ແຈ້ງໃຫ້ທີ່ປະຊຸມ ຮັບຊາບວ່າ ກ່ອນເລີ່ມການປະຊຸມມີຜູ້ຖືກສະເໜີເຂົ້າຄັດເລືອກເປັນສະມາຊິກສະພາບໍລິຫານ ຈຳນວນ 5 ທ່ານ ແຈ້ງຂໍຖອນຕົວ ບໍ່ຮັບຕຳແໜ່ງ ໂດຍມີລາຍຊື່ດັ່ງນີ້

1. ທ່ານນາງ ອິນທະວິໄລ ອຸດົມ
2. ທ່ານນາງ ປາດຖະໜາ ນັກສອນ
3. ທ່ານ ກອງໄກ ນິດສະຍັນ
4. ທ່ານນາງ ສຸທິດາ ນັກສອນ
5. ທ່ານ ນັນທະພັດ ງາມປລັ່ງ

ສະນັ້ນ ຍັງມີຜູ້ທີ່ຖືກສະເໜີຄັດເລືອກເຂົ້າເປັນສະມາຊິກສະພາບໍລິຫານ ລວມທັ້ງໝົດ 9 ຄົນ ເຊິ່ງມີຈຳນວນຫຼາຍກວ່າ 5 ຄົນຂຶ້ນໄປ ເປັນໄປຕາມຂໍ້ຕົກລົງວ່າດ້ວຍສະມາຊິກສະພາບໍລິຫານ ເລກທີ 10/ຄຄຊ. ລົງວັນທີ 26 ເມສາ 2019,

ແລະ ເພື່ອໃຫ້ເກີດຄວາມໂປ່ງໃສ ໃນການພິຈາລະນາຄັດເລືອກ ສະມາຊິກສະພາບໍລິຫານແຕ່ລະທ່ານ ລະຫວ່າງທີ່ຢູ່ໃນຂັ້ນຕອນການພິດຈາລະນາຄັດເລືອກຜູ້ຖືກສະເໜີ ຂໍໃຫ້ຜູ້ຖືກສະເໜີແຕ່ລະທ່ານທີເຂົ້າຮ່ວມປະຊຸມອອກຈາກຫ້ອງປະຊຸມເປັນການຊົ່ວຄາວ

ທ່ານປະທານຈະໄດ້ສະເໜີລາຍຊື່ຜູ້ຖືກສະເໜີເປັນສະມາຊິກສະພາບໍລິຫານ ໃຫ້ທີ່ປະຊຸມພິຈາລະນາເປັນແຕ່ລະຄົນໂດຍລຽນຕາມລຳດັບ ດັ່ງຕໍ່ໄປນີ້

7.1 ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານອິດສະຫຼະ ທ່ານ ອັນຄຳ ວໍລະວົງ

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາແຕ່ງຕັ້ງ ທ່ານ ອັນຄຳ ວໍລະວົງ ເປັນ ສະມາຊິກສະພາບໍລິຫານຊຸດໃຫມ່ ທົດແທນຊຸດປະຈຸບັນທີ່ກຳລັງໝົດວາລະລົງ ໃນວາລະກອງປະຊຸມ ຄັ້ງນີ້, ກອງປະຊຸມຈະລົງຄະແນນສຽງຮັບຮອງເອົາຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງໃນກອງປະຊຸມ.

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາແຕ່ງຕັ້ງ ທ່ານ ອັນຄຳ ວໍລະວົງ ເປັນ ສະມາຊິກສະພາບໍລິຫານອິດສະຫຼະ

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງດັ່ງນີ້:

- ເຫັນດີ 32,139,352 ສຽງ ຄິດເປັນ 100.0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 %
- ລວມ 32,139,352 ສຽງ ຄິດເປັນ 100.0 %

<u>ມະຕິ:</u> ກອງປະຊຸມມີມະຕິອະນຸມັດແຕ່ງຕັ້ງ ທ່ານ ອັນຄຳ ວໍລະວົງ ເປັນ ສະມາຊິກສະພາບໍລິຫານອິດສະຫຼະ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

7.2 ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານອິດສະຫຼະ ທ່ານ ວິນຍູ ຈີລະປະພາການ

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາແຕ່ງຕັ້ງ ທ່ານ ວິນຍູ ຈີລະປະພາການ ເປັນ ສະມາຊິກສະພາບໍລິຫານຊຸດໃຫມ່ ທົດແທນຊຸດປະຈຸບັນທີ່ກຳລັງໝົດວາລະລົງ ໃນວາລະກອງປະຊຸມຄັ້ງນີ້, ກອງປະຊຸມຈະລົງຄະແນນສຽງຮັບຮອງເອົາຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງໃນກອງປະຊຸມ ແລະ ຂໍ ເຊີນ ທ່ານວິນຍູ ຈີລະປະພາການ ອອກຈາກຫ້ອງປະຊຸມເປັນການຊົ່ວຄາວ ລະຫວ່າງການພິຈາລະນາ ວາລະນີ້

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາແຕ່ງຕັ້ງ ທ່ານ ວິນຍູ ຈີລະປະພາການ ເປັນສະມາຊິກສະພາບໍລິຫານອິດສະຫຼະ

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງດັ່ງນີ້:

- ເຫັນດີ 32,139,352 ສຽງ ຄິດເປັນ 100.0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 %
- ລວມ 32,139,352 ສຽງ ຄິດເປັນ 100.0 %

<u>ມະຕິ:</u> ກອງປະຊຸມມີມະຕິອະນຸມັດແຕ່ງຕັ້ງ ທ່ານ ວິນຍູ ຈີລະປະພາການ ເປັນສະມາຊິກສະພາບໍລິຫານ ອິດສະຫຼະ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

7.3 ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານອິດສະຫຼະ ທ່ານ ທິຣະເມດ ວຸດທິພັດພິບູນ

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາແຕ່ງຕັ້ງ ທ່ານ ທິຣະເມດ ວຸດທິພັດພິບູນ ເປັນສະມາຊິກສະພາບໍລິຫານຊຸດໃຫມ່ ທົດແທນຊຸດປະຈຸບັນທີ່ກຳລັງໝົດວາລະລົງ ໃນວາລະກອງປະຊຸມຄັ້ງນີ້, ກອງປະຊຸມຈະລົງຄະແນນສຽງຮັບຮອງເອົາຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງໃນກອງປະຊຸມ ແລະ ຂໍເຊີນ ທ່ານ ທິຣະເມດ ວຸດທິພັດພິບູນ ອອກຈາກຫ້ອງປະຊຸມເປັນການຊົ່ວຄາວ ລະຫວ່າງການພິຈາລະນາວາລະນີ້

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາແຕ່ງຕັ້ງທ່ານ ທິຣະເມດ ວຸດທິພັດພິບູນ ເປັນສະມາຊິກສະພາບໍລິຫານອິດສະຫຼະ

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງດັ່ງນີ້:

- ເຫັນດີ 32,076,852 ສຽງ ຄິດເປັນ 100.0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 %
- ລວມ 32,076,852 ສຽງ ຄິດເປັນ 100.0 %

<u>ມະຕິ:</u> ກອງປະຊຸມມີມະຕິອະນຸມັດແຕ່ງຕັ້ງທ່ານ ທິຣະເມດ ວຸດທິພັດພິບູນ ເປັນສະມາຊິກສະພາບໍລິຫານ ອິດສະຫຼະ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

7.4 ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານອິດສະຫຼະ ທ່ານ ນັນທະພັດ ງາມປລັ່ງ

ທ່ານປະທານແຈ້ງໃຫ້ທີ່ປະຊຸມຮັບຊາບວ່າ ບໍ່ໄດ້ພິຈາລະນາໃນວາລະນີ້ ເນື່ອງຈາກວ່າ ຜູ້ຖືກສະເໜີໄດ້ຂໍຖອນໂຕອອກຈາກການເປັນສະມາຊິກສະພາບໍລິຫານ

7.5 ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ທ່ານ ຊາຄຣິດ ນັກສອນ

ເນື່ອງຈາກເປັນວາລະການພິຈາລະນາ ທີ່ກ່ຽວຂ້ອງກັບທ່ານປະທານ ທ່ານປະທານຈຶ່ງ ມອບໝາຍໃຫ້ ຜູ້ອຳນວຍໃຫຍ່ ແລະ ສະມາຊິກສະພາບໍລິຫານ ທ່ານ ມານົບ ຕຣີລິດວິໄລ ເປັນຜູ້ດຳເນີນການປະຊຸມແທນ ແລະ ທ່ານປະທານໄດ້ອອກຈາກຫ້ອງປະຊຸມເປັນການຊົ່ວຄາວ

ຜູ້ອຳນວຍການໃຫຍ່ສະເໜີໃຫ້ກອງປະຊຸມພິຈາລະນາແຕ່ງຕັ້ງ ທ່ານ ຊາຄຣິດ ນັກສອນ ເປັນສະມາຊິກສະພາບໍລິຫານຊຸດໃໝ່ ທົດແທນຊຸດປະຈຸບັນທີ່ກຳລັງໝົດວາລະລົງ ໃນວາລະກອງປະຊຸມຄັ້ງນີ້, ກອງປະຊຸມຈະລົງຄະແນນສຽງຮັບຮອງເອົາຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງໃນກອງປະຊຸມ.

ຜູ້ອຳນວຍການໃຫຍ່ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວຜູ້ອຳນວຍການໃຫຍ່ຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາແຕ່ງຕັ້ງທ່ານ ຊາຄຣິດ ນັກສອນ ເປັນສະມາຊິກສະພາບໍລິຫານທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງດັ່ງນີ້:

- ເຫັນດີ 31,984,436 ສຽງ ຄິດເປັນ 100.0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 %
- ລວມ 31,984,436 ສຽງ ຄິດເປັນ 100.0 %

<u>ມະຕິ:</u> ກອງປະຊຸມມີມະຕິອະນຸມັດແຕ່ງຕັ້ງທ່ານ ຊາຄຣິດ ນັກສອນ ເປັນສະມາຊິກສະພາບໍລິຫານທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

7.6 ພິຈາລະນາແຕ່ງຕັ້ງສະມາຊິກທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ທ່ານນາງ ອິນທະວິໄລ ອຸດົມ

ທ່ານປະທານແຈ້ງໃຫ້ທີ່ປະຊຸມຮັບຊາບວ່າ ບໍ່ໄດ້ພິຈາລະນາວາລະນີ້ ເນື່ອງຈາກວ່າ ຜູ້ຖືກສະເໜີໄດ້ຂໍຖອນໂຕອອກຈາກການເປັນສະມາຊິກສະພາບໍລິຫານ

7.7 ພິຈາລະນາແຕ່ງຕັ້ງສະມາຊິກທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ທ່ານນາງ ປຣາຖະໜາ ນັກສອນ

ທ່ານປະທານແຈ້ງໃຫ້ທີ່ປະຊຸມຮັບຊາບວ່າ ບໍ່ໄດ້ພິຈາລະນາວາລະນີ້ ເນື່ອງຈາກວ່າ ຜູ້ຖືກສະເໜີໄດ້ຂໍຖອນໂຕອອກຈາກການເປັນສະມາຊິກສະພາບໍລິຫານ

7.8 ພິຈາລະນາແຕ່ງຕັ້ງສະມາຊິກທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ທ່ານນາງ ສຸທິດາ ນັກສອນ

ທ່ານປະທານແຈ້ງໃຫ້ທີ່ປະຊຸມຮັບຊາບວ່າ ບໍ່ໄດ້ພິຈາລະນາວາລະນີ້ ເນື່ອງຈາກວ່າ ຜູ້ຖືກສະເໜີໄດ້ຂໍຖອນໂຕອອກຈາກການເປັນສະມາຊິກສະພາບໍລິຫານ

7.9 ພິຈາລະນາແຕ່ງຕັ້ງສະມາຊິກທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ທ່ານ ກຽງໄກ ນິດສະຍັນ

ທ່ານປະທານແຈ້ງໃຫ້ທີ່ປະຊຸມຮັບຊາບວ່າ ບໍ່ໄດ້ພິຈາລະນາວາລະນີ້ ເນື່ອງຈາກວ່າ ຜູ້ຖືກສະເໜີໄດ້ຂໍຖອນໂຕອອກຈາກການເປັນສະມາຊິກສະພາບໍລິຫານ

7.10 ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ທ່ານ ທິຣະ ຊຸຕິວະ ລາພອນ

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາແຕ່ງຕັ້ງ ທ່ານ ທິຣະ ຊຸຕິວະລາພອນ ເປັນ ສະມາຊິກສະພາບໍລິຫານຊຸດໃຫມ່ ທົດແທນຊຸດປະຈຸບັນທີ່ກຳລັງໝົດວາລະລົງ ໃນວາລະກອງປະຊຸມຄັ້ງນີ້, ກອງປະຊຸມຈະລົງຄະແນນສຽງຮັບຮອງເອົາຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງໃນກອງປະຊຸມ.

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາແຕ່ງຕັ້ງ ທ່ານ ທິຣະ ຊຸຕິວະ ລາພອນ ເປັນສະມາຊິກສະພາບໍລິຫານທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງ ດັ່ງນີ້:

- ເຫັນດີ 32.139.352 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 32.139.352 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

<u>ມະຕິ:</u> ກອງປະຊຸມມີມະຕິອະນຸມັດແຕ່ງຕັ້ງ ທ່ານ ທິຣະ ຊຸຕິວະລາພອນ ເປັນສະມາຊິກສະພາບໍລິຫານທີ່ບໍ່ມີ ສ່ວນຮ່ວມໃນການບໍລິຫານ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

7.11 ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ທ່ານ ວິຊຸນ ລັກຄະນາ ທິນ

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາແຕ່ງຕັ້ງ ທ່ານ ວິຊຸນ ລັກຄະນາທິນເປັນ ສະມາຊິກສະພາບໍລິຫານຊຸດໃຫມ່ ທົດແທນຊຸດປະຈຸບັນທີ່ກຳລັງໝົດວາລະລົງ ໃນວາລະກອງປະຊຸມຄັ້ງນີ້, ກອງປະຊຸມຈະລົງຄະແນນສຽງຮັບຮອງເອົາຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງໃນກອງປະຊຸມ.

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາແຕ່ງຕັ້ງທ່ານ ວິຊຸນ ລັກຄະນາທິນ ເປັນສະມາຊິກສະພາບໍລິຫານທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງ ດັ່ງນີ້:

- ເຫັນດີ 32.139.352 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 32.139.352 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

<u>ມະຕິ:</u> ກອງປະຊຸມມີມະຕິອະນຸມັດແຕ່ງຕັ້ງ ທ່ານ ວິຊຸນ ລັກຄະນາທິນ ເປັນສະມາຊິກສະພາບໍລິຫານທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

7.12 ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ທ່ານ ໄວຮຸ່ງ ມີນາກຸນ

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາແຕ່ງຕັ້ງ ທ່ານ ໄວຮຸ່ງ ມີນາກຸນ ເປັນສະມາຊິກສະພາບໍລິຫານຊຸດໃຫມ່ ທົດແທນຊຸດປະຈຸບັນທີ່ກຳລັງໝົດວາລະລົງ ໃນວາລະກອງປະຊຸມຄັ້ງນີ້, ກອງປະຊຸມຈະລົງຄະແນນສຽງຮັບຮອງເອົາຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງໃນກອງປະຊຸມ.

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາແຕ່ງຕັ້ງທ່ານ ໄວຮຸ່ງ ມີນາກຸນ ເປັນສະມາຊິກສະພາບໍລິຫານທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງ ດັ່ງນີ້:

- ເຫັນດີ 32.139.352 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 32.139.352 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

<u>ມະຕິ:</u> ກອງປະຊຸມມີມະຕິອະນຸມັດແຕ່ງຕັ້ງ ທ່ານ ໄວຮຸ່ງ ມີນາກຸນ ເປັນສະມາຊິກສະພາບໍລິຫານທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

7.13 ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ທ່ານ ໂກວິດ ເກີດສີລິລັກ

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາແຕ່ງຕັ້ງ ທ່ານ ໂກວິດ ເກີດສີລິລັກ ເປັນສະມາຊິກສະພາບໍລິຫານຊຸດໃຫມ່ ທົດແທນຊຸດປະຈຸບັນທີ່ກຳລັງໝົດວາລະລົງ ໃນວາລະກອງປະຊຸມຄັ້ງນີ້, ກອງປະຊຸມຈະລົງຄະແນນສຽງຮັບຮອງເອົາຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງໃນກອງປະຊຸມ.

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາແຕ່ງຕັ້ງທ່ານ ໂກວິດ ເກີດສີລິລັກ ເປັນສະມາຊິກສະພາບໍລິຫານບໍ່ມີສ່ວນຮ່ວມໃນການບໍລິຫານ

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງ ດັ່ງນີ້:

- ເຫັນດີ 32.139.352 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 32.139.352 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

<u>ມະຕິ:</u> ກອງປະຊຸມມີມະຕິອະນຸມັດແຕ່ງຕັ້ງ ທ່ານ ໂກວິດ ເກີດສີລິລັກ ເປັນສະມາຊິກສະພາບໍລິຫານບໍ່ມີສ່ວນຮ່ວມໃນການບໍລິຫານ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

7.14 ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານທີ່ມີສ່ວນຮ່ວມໃນການບໍລິຫານ ທ່ານ ມານົບ ຕຣີລິດ ວິໄລ

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາແຕ່ງຕັ້ງ ທ່ານ ມານົບ ຕຣີລິດວິໄລເປັນສະມາຊິກສະພາບໍລິຫານຊຸດໃຫມ່ ທົດແທນຊຸດປະຈຸບັນທີ່ກຳລັງໝົດວາລະລົງ ໃນວາລະກອງປະຊຸມຄັ້ງນີ້,

ກອງປະຊຸມຈະລົງຄະແນນສຽງຮັບຮອງເອົາຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງໃນກອງປະຊຸມ ແລະ ຂໍເຊີນ ທ່ານ ມານົບ ຕຣີລິດວິໄລ ອອກຈາກຫ້ອງປະຊຸມເປັນການຊົ່ວຄາວ ລະຫວ່າງການພິຈາລະນາວາລະນີ້

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາແຕ່ງຕັ້ງ ທ່ານ ມານົບ ຕຣີລິດວິໄລ ເປັນສະມາຊິກສະພາບໍລິຫານທີ່ມີສ່ວນຮ່ວມໃນການບໍລິຫານ

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງ ດັ່ງນີ້:

- ເຫັນດີ 31.842.944 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 31.842.944 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

<u>ມະຕິ:</u> ກອງປະຊຸມມີມະຕິອະນຸມັດແຕ່ງຕັ້ງ ທ່ານ ມານົບ ຕຣີລິດວິໄລ ເປັນສະມາຊິກສະພາບໍລິຫານທີ່ມີສ່ວນຮ່ວມໃນການບໍລິຫານ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

ວາລະທີ 8 ພິຈາລະນາອະນຸມັດຈ່າຍຄ່າຕອບແທນລາຍປີ 2021 ສຳລັບຜູ້ອຳນວຍການຂອງບໍລິສັດ

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາອະນຸມັດຈ່າຍຄ່າຕອບແທນລາຍປີ 2021 ສຳລັບຜູ້ອຳນວຍການຂອງບໍລິສັດ ໃນວາລະກອງປະຊຸມຄັ້ງນີ້, ກອງປະຊຸມຈະລົງຄະແນນສຽງຮັບຮອງເອົາຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງໃນກອງປະຊຸມ.

ປະທານກອງປະຊຸມ ໄດ້ມອບໝາຍໃຫ້ ທ່ານ ມານົບ ຕຣີລິດວິໄລ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ເປັນຜູ້ນຳສະເໜີກ່ຽວກັບການຈ່າຍຄ່າຕອບແທນລາຍປີ 2021 ສຳລັບຜູ້ອຳນວຍການຂອງບໍລິສັດ ເຊິ່ງບົດສະຫຼຸບດັ່ງນີ້:

- ສະເໜີຂໍອະນຸມັດຈ່າຍຄ່າຕອບແທນຈາກຜົນດຳເນີນງານປະຈຳປີ 2021 ສູງສຸດ 227.0 ລ້ານກີບ ໃຫ້ແກ່ຜູ້ອຳນວຍການຂອງບໍລິສັດ ແລະ ມອບໝາຍໃຫ້ຄະນະກຳມະການກຳນົດຜົນຕອບແທນເປັນຜູ້ຈັດສັນ

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາອະນຸມັດຈ່າຍຄ່າຕອບແທນລາຍປີ 2021 ສຳລັບຜູ້ອຳນວຍການຂອງບໍລິສັດ

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງ ດັ່ງນີ້:

- ເຫັນດີ 32.139.352 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 32.139.352 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

<u>ມະຕິ:</u> ກອງປະຊຸມມີມະຕິກອງປະຊຸມໄດ້ອະນຸມັດຈ່າຍຄ່າຕອບແທນລາຍປີ 2021 ສຳລັບຜູ້ອຳນວຍການຂອງ ບໍລິສັດ ໂດຍຈຳນວນເງິນໂບນັດສູງສຸດ ບໍ່ໃຫ້ເກີນ 227.0 ລ້ານກີບ ແລະ ມອບອຳນາດໃຫ້ຄະນະອານຸກຳມະການກຳນົດຜົນຕອບແທນ ມີໜ້າທີ່ໃນການຈັດສັນ ແລະ ກຳນົດວັນຈ່າຍຕໍ່ໄປ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

ວາລະທີ 9 ພິຈາລະນາອະນຸມັດກຳນົດຜົນຕອບແທນປະຈຳປີ, ເບ້ຍປະຊຸມ ແລະ ເງິນເດືອນຂອງຜູ້ອຳນວຍການ ສຳລັບປີ 2022

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາອະນຸມັດກຳນົດຜົນຕອບແທນປະຈຳປີ, ເບ້ຍປະຊຸມ ແລະ ເງິນເດືອນຂອງຜູ້ອຳນວຍການ ສຳລັບປີ 2022 ໃນວາລະກອງປະຊຸມຄັ້ງນີ້, ກອງປະຊຸມຈະລົງຄະແນນສຽງຮັບຮອງເອົາຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງໃນກອງປະຊຸມ.

ປະທານກອງປະຊຸມ ໄດ້ມອບໝາຍໃຫ້ ທ່ານ ມານົບ ຕຣີລິດວິໄລ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ເປັນຜູ້ນຳສະເໜີກ່ຽວກັບ ສະເໜີຂໍອະນຸມັດກຳນົດຜົນຕອບແທນປະຈຳປີ, ເບ້ຍປະຊຸມ ແລະ ເງິນເດືອນຂອງຜູ້ອຳນວຍການ ສຳລັບປີ 2022 ເຊິ່ງບົດສະຫຼຸບດັ່ງຕໍ່ໄປນີ້:

ຂໍອະນຸມັດກຳນົດຜົນຕອບແທນ, ເບ້ຍປະຊຸມ ແລະ ເງິນເດືອນຂອງຜູ້ອຳນວຍການ ປະຈຳປີ 2022

	ລາຍລະອຽດ	ປະທານ	ກຳມະການ	ຫົວໜ່ວຍ
1.	ຜົນຕອບແທນລາຍເດືອນ	11.250.000	6.250.000	ກີບ/ເດືອນ/ທ່ານ
2.	ເບ້ຍປະຊຸມ: - ສະພາບໍລິຫານ - ຄະນະກຳມະການຊຸດຍ່ອຍ	 2.500.000 1.500.000	 1.500.000 1.000.000	 ກີບ/ຄັ້ງ/ທ່ານ ກີບ/ຄັ້ງ/ທ່ານ
3.	ບຳເນັດປະຈຳປີ	3% ຈາກການປະມານກຳໄລສຸດທິ ປະຈຳປີ 2022 (ພິຈາລະນາປັບເພີ່ມ ຫຼື ຫຼຸດລົງຕາມຜົນງານຈິງ)		

ໝາຍເຫດ: ຜົນຕອບແທນຂ້າງເທິງ ຍັງບໍ່ໄດ້ລວມກັບເງິນເດືອນຂອງຜູ້ອຳນວຍການໃຫຍ່ ເຊິ່ງກຳນົດໄວ້ແລ້ວໃນແຜນງານປະຈຳປີ 2022 (ໃນວາລະທີ 6)

ຜົນຕອບແທນຂອງຜູ່ອຳນວຍການໃນ 3 ປີທີ່ຜ່ານມາ ມີດັ່ງນີ້

ປີ	ລາຍເດືອນ	ເບ້ຍປະຊຸມ	ບຳເນັດປະຈຳປີ	ລວມ
2019	735.000.000	62.000.000	220.000.000	1.017.000.000
2020	735.000.000	79.875.000	210.000.000	1.024.875.000
2021	735.000.000	70.000.000	227.000.000	1.032.000.000

ຜົນຕອບແທນຂ້າງເທິງ ຍັງບໍ່ໄດ້ລວມກັບເງິນເດືອນຂອງຜູ້ອຳນວຍການໃຫຍ່ ທີ່ທຳໜ້າທີບໍລິຫານງານປະຈຳວັນ

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດກຳນົດຜົນຕອບແທນປະຈຳປີ, ເບ້ຍປະຊຸມ ແລະ ເງິນເດືອນຂອງຜູ້ອຳນວຍການ ສຳລັບປີ 2022

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງ ດັ່ງນີ້:

- ເຫັນດີ 32.139.352 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 32.139.352 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

<u>ມະຕິ:</u> ກອງປະຊຸມມີມະຕິອະນຸມັດກຳນົດຜົນຕອບແທນປະຈຳປີ, ເບ້ຍປະຊຸມ ແລະ ເງິນເດືອນຂອງຜູ້ອຳນວຍການ ສຳລັບປີ 2022 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

ວາລະທີ 10 ພິຈາລະນາອະນຸມັດແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຕອບແທນ ສຳລັບການກວດສອບບັນຊີ ປະຈຳປີ 2022

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຕອບແທນສຳລັບການ ກວດສອບບັນຊີ ປະຈຳປີ 2022 ໃນວາລະກອງປະຊຸມຄັ້ງນີ້, ກອງປະຊຸມຈະລົງຄະແນນສຽງຮັບຮອງເອົາຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງໃນກອງປະຊຸມ.

ປະທານກອງປະຊຸມ ໄດ້ມອບໝາຍໃຫ້ ທ່ານ ກອຽງໄກ ນິດສະຍັນ ສະມາຊິກສະພາບໍລິຫານ ແລະ ປະທານຄະນະກຳມະການກວດສອບ, ນຳສະເໜີຂໍອະນຸມັດແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຕອບແທນສຳລັບການກວດສອບບັນຊີປະຈຳປີ 2022, ແລະລາຍງານວ່າ ຕາມທີ່ຄະນະກຳມະການກວດສອບໄດ້ປະຊຸມເມື່ອວັນທີ 7 ມີນາ 2022 ແລ້ວເຫັນວ່າ ທີ່ບໍລິສັດ PWC Lao ຈຳກັດຜູ້ດຽວ ມີມາດຕະຖານການທຳງານທີ່ດີ ມີຄວາມຊ່ຽວຊານໃນການກວດສອບບັນຊີ ແລະ ເປັນຜູ້ກວດສອບທີ່ຢູ່ໃນ Approved List ຂອງຕະຫຼາດຫຼັກຊັບລາວ ພ້ອມທັ້ງເປັນຜູ້ກວດສອບບັນຊີຂອງບໍລິສັດໃນປີທີ່ຜ່ານມາມີຄວາມເຂົ້າໃຈໃນທຸລະກິດເຊົ່າສິນເຊື່ອ ແລະ ມີຄວາມພ້ອມໃນການຫັນປ່ຽນເຂົ້າສູ່ມາດຕະຖານບັນຊີ IFRS ດັ່ງນັ້ນບໍລິສັດຈຶ່ງພິຈາລະນາແຕ່ງຕັ້ງຜູ້ກວດສອບບັນຊີປະຈຳປີ 2022 ເຊິ່ງບົດສະຫຼຸບດັ່ງຕໍ່ໄປນີ້:

- ແຕ່ງຕັ້ງ ບໍລິສັດ PWC (Lao) ຈຳກັດຜູ້ດຽວ ເປັນຜູ້ກວດສອບບັນຊີປະຈຳປີ 2022
- ກຳນົດຄ່າຕອບແທນສຳລັບກວດສອບບັນຊີ ຈຳນວນ 30,000 ໂດລາສະຫະລັດ ຍັງບໍ່ລວມຄ່າອາກອນ ແລະ Out of Pocket

ຜູ້ກວດສອບບັນຊີພາຍນອກ ແລະ ຄ່າຕອບແທນ ສຳລັບ 4 ປີທີ່ຜ່ານມາ ດັ່ງນີ້

ປີ	ຜູ້ກວດສອບ	ຄ່າຕອບແທນລວມ
• 2018	Deloitte Lao	31,500 USD
• 2019	Deloitte Lao	32,500 USD
• 2020	Deloitte Lao	32,500 USD
• 2021	PWC Lao	28,700 USD

ເຫດຜົນສຳຄັນທີ່ບໍລິສັດແຕ່ງຕັ້ງ ບໍລິສັດ PWC (Lao) ຈຳກັດຜູ້ດຽວ ເປັນຜູ້ກວດສອບບັນຊີ ປະຈຳປີ 2022 ດັ່ງນີ້:

- ເປັນບໍລິສັດກວດສອບທີ່ດຳເນີນທຸລະກິດໃນ ສປປ ລາວ ມາເປັນໄລຍະເວລານານຫຼາຍປີ ເຊິ່ງ ມີປະສົບການ ແລະ ຄວາມເຂົ້າໃຈເປັນຢ່າງດີ
- ເປັນບໍລິສັດກວດສອບບັນຊີຂອງບໍລິສັດໃນປີທີ່ຜ່ານມາ ເຊິ່ງຈະເຮັດໃຫ້ມີຄວາມຕໍ່ເນື່ອງໃນການ ເຮັດວຽກ
- ຄ່າຕອບແທບໃນການກວດສອບບັນຊີມີຄວາມເໝາະສົມ ແມ່ນວ່າຈະເພີ່ມຂຶ້ນກ່ອນປີທີ່ຜ່ານມາ ຮ້ອຍລະ 4,53 ແຕ່ກໍ່ຍັງຖືກກ່ອນ 3 ປີກ່ອນໜ້າ ທີທາງບໍລິສັດຈ້າງຜູ້ກວດສອບບັນຊີລາຍອື່ນ

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດແຕ່ງຕັ້ງຜູ້ກວດ ສອບບັນຊີພາຍນອກ ແລະ ກຳນົດຄ່າຕອບແທນ ສຳລັບການກວດສອບບັນຊີປະຈຳປີ 2022

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງ ດັ່ງນີ້:

- ເຫັນດີ 32.139.352 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 32.139.352 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

<u>ມະຕິ:</u> ກອງປະຊຸມມີມະຕິອະນຸມັດແຕ່ງຕັ້ງ ບໍລິສັດ PWC (Lao) ຈຳກັດຜູ້ດຽວ ເປັນຜູ້ກວດສອບບັນຊີພາຍ ນອກ ແລະ ກຳນົດຄ່າຕອບແທນສຳລັບການກວດສອບບັນຊີປະຈຳປີ 2022 ຈຳນວນ 30,000 ໂດລາ ສະຫະລັດ ຍັງບໍ່ລວມຄ່າອາກອນ ແລະ Out of Pocket ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນ ສຽງທີ່ເຂົ້າຮ່ວມປະຊຸມ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

628, ໜ່ວຍ 19, ບ້ານ ໂພນໂພເພົາ, ນ.ມ. 5, ຖະໜົນ ໄກສອນພົມວິຫານ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.
ໂທ-ແຟັກ: +856 21 418 062-6

ວາລະທີ 11 ເລື່ອງອື່ນໆ (ຖ້າມີ)

ບໍ່ມີທ່ານໃດສະເໜີ ຫຼື ສອບຖາມເລື່ອງໃດໆເພີ່ມເຕີມ

ບໍ່ມີເລື່ອງອື່ນໆທີ່ຕ້ອງໃຫ້ກອງປະຊຸມຮັບຊາບ ແລະ ພິຈາລະນາ ທ່ານປະທານກອງປະຊຸມຈຶ່ງສະເໜີໃຫ້ປິດກອງປະຊຸມໃນເວລາ 12:18 ໂມງ

ເລຂານຸການບໍລິສັດ

(ທ່ານ ພົງສີລີ ທອງແຖມ ນະ ອະຍຸດທະຍາ)

ປະທານກອງປະຊຸມ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ MAHATHUEN LEASING PUBLIC COMPANY

(ທ່ານ ຊາຄຣິດ ບັກສອນ)